## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສຳນັກງານນາຍົກລັດຖະມົນຕີ**

ເລກທີ 100 / ນຍ

ນະຄອນຫຼວງວຽງຈັນ, ວັນທີ 04.04.2009

## ດຳລັດ
## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້
## ຂອບພັດທະນາຂະແໜງການສຶກສາ ແຕ່ປີ 2009-2015

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2007;
- ອີງຕາມກົດໝາຍ ວ່າດ້ວຍການສຶກສາ ສະບັບເລກທີ 04/ສພຊ, ລົງວັນທີ 3 ກໍລະກົດ 2007;
- ອີງຕາມແຜນຍຸດທະສາດປະຕິຮູບລະບົບການສຶກສາແຫ່ງຊາດ ສະບັບເດືອນ ກໍລະກົດ 2008;
- ອີງຕາມການສະເໜີ ຂອງລັດຖະມົນຕີວ່າການ ກະຊວງສຶກສາທິການ ສະບັບເລກທີ 145/ສສ.09, ລົງວັນທີ 16 ກຸມພາ 2009.

ນາຍົກລັດຖະມົນຕີ ອອກດຳລັດ :

<u>ມາດຕາ 1</u> : ຮັບຮອງ ແລະ ປະກາດໃຊ້ ຂອບພັດທະນາຂະແໜງການສຶກສາ ແຕ່ປີ 2009-2015 ຢ່າງເປັນທາງການ.

<u>ມາດຕາ 2</u> : ມອບໃຫ້ກະຊວງສຶກສາທິການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຂອບພັດທະນາຂະແໜງການດັ່ງກ່າວ ໃຫ້ປະກົດຜົນເປັນຈິງ ແລະ ລາຍງານໃຫ້ລັດຖະບານຊາບແຕ່ລະໄລຍະ.

<u>ມາດຕາ 3</u> : ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

<u>ມາດຕາ 4</u> : ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

**ບົວສອນ ບຸບຜາວັນ**